**ຄວາມເປັນນໍ້າໜຶ່ງໃຈດຽວກັນ ໃນຄວາມຖ່ອມໂຕ**
**ບົດຮຽນທີ 4 ສໍາລັບສະບາໂຕທີ 24 ມັງກອນ 2026**
"ກໍຂໍໃຫ້ເຈົ້າທັງຫລາຍເຮັດໃຫ້ຄວາມຍິນດີຂອງເຮົາຄົບເຕັມດ້ວຍການທີ່ມີຄວາມຄິດຢ່າງດຽວກັນ ມີຄວາມຮັກຢ່າງດຽວກັນ ມີໃຈສາມັກຄີເປັນນໍ້າໜຶ່ງໃຈດຽວກັນ"
ຟລປ 2:2

ອຈ ໂປໂລໄດ້ໜູນໃຈຜູ້ເຊື່ອທີ່ຢູ່ເມືອງຟີລິບປອຍໃຫ້ພວກເຂົາຢືນຢັດຍຶດໝັ້ນຕໍ່ຄວາມທ້າທາຍໃນຊີວິດຄຣິສຕຽນ. ລາວໄດ້ຮ້ອງຂໍໃຫ້ພວກເຂົາປະພຶດໃຫ້ສົມກັບເປັນພົນລະເມືອງແຫ່ງສະຫວັນ ໂດຍເນັ້ນຢໍ້າໄປທີ່ຄວາມເປັນເອກະພາບນໍ້າໜຶ່ງໃຈດຽວກັນ.ດ້ວຍການສະແດງອອກໂດຍກ່າວວ່າ "ເພາະສະນັ້ນ", ອຈ ໂປໂລຈຶ່ງໄດ້ເລີ່ມຕົ້ນພາກສ່ວນໃໝ່ ເຊິ່ງເປັນກະແຈສໍາຄັນໃນການທີ່ຈະເຂົ້າໃຈຄວາມເປັນເອກະພາບທີ່ສົມບູນແບບ: ນັ້ນກໍ່ຄື ການຮຽນຕາມແບບຢ່າງຂອງພຣະເຢຊູ

| |
|---|
| **ຕົ້ນກໍາເນີດຂອງຄວາມແຕກແຍກ (ຟລປ 2:1-3a)** |
| **ຄວາມເປັນເອກະພາບ ຜ່ານທາງການຖ່ອມໂຕ (ຟລປ 2:3b-4)** |
| **ຄິດແບບພຣະເຢຊູ (ຟລປ 2:5)** |
| **ທັດສະນະຄະຕິຂອງພຣະເຢຊູ (ຟລປ 2:6-8)** |

## ຕົ້ນກໍາເນີດຂອງຄວາມແຕກແຍກ

"ຢ່າເຮັດສິ່ງໃດໃນທາງຊິງດີ ຫລື ຖືດີກັນ ແຕ່ຈົ່ງຖ່ອມໃຈລົງ" (ຟລປ 2:3)
ກ່ອນທີ່ ອຈ ໂປໂລຈະຊີ້ໃຫ້ເຫັນເຖິງຈຸດອ່ອນ ແລະ ສາເຫດຂອງຄວາມແຕກແຍກທີ່ເກີດຂຶ້ນໃນຊາວຟີລິບປອຍ, ຄໍາແນະນໍາທີ່ ອຈ ໂປໂລມອບໃຫ້ແກ່ພວກເຂົາເພື່ອໃຫ້ເກີດຄວາມສາມັກຄີ ແລະ ເຕີມເຕັມຄວາມສຸກຂອງພຣະອົງແມ່ນຫຍັງ? (ຟລປ. 2:1-2)

| | |
|---|---|
| **ປອບໂຍນໃນພຣະຄຣິດ** | ລາວໜູນໃຈພວກເຂົາໃຫ້ສຶກສາຮຽນຮູ້ແບບຢ່າງຈາກພຣະຄຣິດ |
| **ປອບໂຍນໃນຄວາມຮັກ** | ຄວາມຮັກທີ່ມີຕໍ່ພຣະຄຣິດເປັນພະລັງໃນການກະຕຸ້ນຈິດໃຈຂອງພວກເຂົາ |
| ມີຄວາມສາມັກຄີກັບພຣະວິນຍານບໍຣິສຸດ | ພວກເຂົາຕ້ອງຍອມໃຫ້ພຣະວິນຍານບໍຣິສຸດນຳທາງ |
| ຄວາມຮັກຈາກໃຈຈິງ | ພວກເຂົາຕ້ອງສະທ້ອນອາລົມ, ຄວາມຮູ້ສຶກທີ່ອ່ອນໂຍນແລະອົບອຸ່ນຂອງຄວາມຮັກຕໍ່ມະນຸດ |
| **ຄວາມເມດຕາ** | ໃຫ້ສະແດງຄວາມຮັກທີ່ແທ້ຈິງຜ່ານການກະທຳແຫ່ງຄວາມເມດຕາຂອງແຕ່ລະບຸກຄົນ |
| **ເປັນໜຶ່ງດຽວໃນຄວາມຮູ້ສຶກ ແລະ ຄວາມຮັກ** | ມີຄວາມຮັກຕໍ່ກັນແລະກັນຈະເຮັດໃຫ້ຄວາມຄິດຄ້າຍຄືກັນ ແລະ ກາຍເປັນໜຶ່ງດຽວ |

ທັງໝົດນີ້ພວກເຂົາຈະເຮັດໄດ້ກໍ່ຕໍ່ເມື່ອພວກເຂົາລະຖິ້ມສິ່ງທີ່ເຮັດໃຫ້ພວກເຂົາແຕກແຍກກັນ: : ຄວາມຍິ່ງທະນົງໂຕ ແລະ ການໂຕ້ຖຽງກັນ (ຟລປ. 2:3a).ທັງສອງສິ່ງນີ້ມີຢູ່ໃນນິໄສ ແລະ ການກະບົດຂອງລູຊີເຟີ, ແລະເປັນບັນຫາທີ່ຮ້າຍແຮງທີ່ສຸດສຳລັບຄວາມສຳພັນລະຫວ່າງເຊິ່ງກັນແລະກັນ (ຄລຕ. 5:26; Jas. 3:16).

## ຂໍ້ຄິດເພີ່ມເຕີມ

ຕົ້ນກຳເນີດຂອງຄວາມບໍ່ສາມັກຄີ ເກີດຂຶ້ນຈາກຄວາມພູມໃຈ ແລະ ຄວາມປາຖະໜາໃນອຳນາດ ແລະ ຕຳແໜ່ງຂອງທູດສະຫວັນອົງໜຶ່ງ (ເຊິ່ງເຂົ້າໃຈໂດຍທົ່ວໄປວ່າເປັນລູຊີເຟີ). ເຊິ່ງເປັນເມັດພັນແຫ່ງຄວາມບໍ່ສາມັກຄີ. ທູດສະຫວັນອົງນີ້ຍົກຕົນເອງສູງກວ່າພຣະເຈົ້າ.

ຄວາມເປັນເອກະພາບ ຜ່ານທາງການຖ່ອມໂຕ

"...ແຕ່ຈົ່ງຖ່ອມໃຈລົງຖືວ່າຄົນອື່ນດີກວ່າຕົນ ຢ່າໃຫ້ຜູ້ໃດເຫັນແກ່ຜົນປະໂຫຍດຂອງຕົນແຕ່ຝ່າຍດຽວ, ແຕ່ຈົ່ງຄິດເຖິງຜົນປະໂຫຍດຂອງຄົນອື່ນດ້ວຍ." (ຟລປ 2:3-4)

ສູດແຫ່ງຄວາມເປັນເອກະພາບກັນທີ່ ອຈ ໂປໂລສອນບໍ່ແມ່ນສິ່ງພາຍນອກ, ແຕ່ເປັນທັດສະນະຄະຕິພາຍໃນ ຄື:ຄວາມຖ່ອມໂຕ. ສິ່ງນີ້ນອກຈາກຈະເປັນລັກສະນະນິໄສສະເພາະໂຕຂອງພຣະເຢຊູແລ້ວ, ພຣະອົງກໍ່ໜູນໃຈຜູ້ຟັງໃຫ້ມີຄວາມຖ່ອມໂຕເຊັ່ນກັນ(ມທ. 11:29; 18:4; 23:12).

ເພື່ອໃຫ້ບັນລຸເຖິງການຖ່ອມໂຕນີ້, ອຈ ໂປໂລໄດ້ບອກວ່າ ເຮົາຄວນພິຈາລະນາເຖິງຄົນອື່ນຫລາຍກວ່າຕົນເອງ (ຟລປ. 2:3). ແຕ່ພວກເຮົາທຸກຄົນເທົ່າທຽມກັນຕໍ່ໜ້າພຣະພັກພຣະເຈົ້າບໍ່ແມ່ນບໍ? ດັ່ງນັ້ນ ຖ້າຢາກໃຫ້ມີຄວາມສາມັກຄີກັນ ກໍ່ຄວນມີຄວາມສະເໝີພາບກັນອຈ ໂປໂລບໍ່ໄດ້ກ່າວວ່າ ພວກເຮົາດ້ອຍກວ່າຄົນອື່ນ, ແຕ່ວ່າ <u>*ພວກເຮົາຄວນຈະພິຈາລະນາຕົນເອງ*</u> ໃຫ້ເປັນແບບທີ່ກ່າວມານັ້ນ. ເຊັ່ນດຽວກັນກັບຄົນຮັບໃຊ້ທີ່ພູມໃຈໃນຄວາມດີຂອງເຈົ້ານາຍ, ພວກເຮົາຄວນຈະພູມໃຈໃນຄວາມດີຂອງຜູ້ອື່ນທີ່ພວກເຮົາຄິດວ່າ<u>*ເໜືອກວ່າຕົວຂອງພວກເຮົາເອງ ເຊັ່ນກັນ*</u>(ຟລປ. 2:4).ເພື່ອທີ່ຈະສາມາດຊ່ວຍຄົນອື່ນໄດ້, ພວກເຮົາຄວນຈະຮຽນຮູ້ທີ່ຈະຟັງພວກເຂົາ ແລະ ເຂົ້າໃຈມຸມມອງຂອງພວກເຂົາ. ສິ່ງເຫລົ່ານີ້ທັງໝົດ ແມ່ນມາຈາກຜົນຂອງພຣະວິນຍານບໍຣິສຸດ ແບບບໍ່ຕ້ອງສົງໄສ.

## ຂໍ້ຄິດເພີ່ມເຕີມ

"ຄວາມສາມັກຄີທີ່ແທ້ຈິງ ບໍ່ວ່າຈະຢູ່ໃນຄຣິດຕະຈັກ, ຄອບຄົວໝູ່ເພື່ອນ, ຫລື ຊຸມຊົນຂອງພວກເຮົາ. ສິ່ງເຫລົ່ານີ້ບໍ່ສາມາດສ້າງຂຶ້ນໄດ້ຈາກຄວາມທະເຍີທະຍານ, ການແຂ່ງຂັນ ຫລື ຄວາມພູມໃຈຂອງຕົນເອງໄດ້.

ແຕ່ສາມາດສ້າງຂື້ນໄດ້ໂດຍການເຮັດຕາມແບບຢ່າງຂອງພຣະເຢຊູຄື: ຄວາມຖ່ອມໃຈ, ເຫັນແກ່ຜົນປະໂຫຍດສ່ວນລວມ ແລະ ຍອມຈຳນົນຕໍ່ນ້ຳພຣະໄທຂອງພຣະອົງ ແທນຄວາມປາຖະໜາຂອງຕົນເອງ."
ໂດຍການຖ່ອມໃຈ ເຮົາກໍປະກາດແລ້ວວ່າ ເຮົາໃຫ້ກຽດພຣະເຈົ້າ, ແລະດ້ວຍຄວາມສາມັກຄີຕໍ່ກັນແລະກັນ ພວກເຮົາກໍ່ສະທ້ອນເຖິງຄວາມຮັກຂອງພຣະຄຣິດອອກມາ. ດັ່ງນັ້ນ ຈົ່ງເລືອກຄວາມຮັກທີ່ຖ່ອມໃຈ ແທນການຍົກຕົນເອງຂຶ້ນ ເພື່ອໃຫ້ພຣະວິນຍານບໍຣິສຸດປະສານໃຈຂອງພວກເຮົາໃຫ້ເປັນນ້ຳໜຶ່ງໃຈດຽວກັນຢ່າງແທ້ຈິງ.

## ຄິດແບບພຣະເຢຊູ

"ຈົ່ງມີນ້ຳໃຈຕໍ່ກັນ ເໝືອນຢ່າງທີ່ມີໃນພຣະຄຣິດເຈົ້າເຢຊູ" (ຟລປ 2:5 )
ຄວາມຄິດຂອງພວກເຮົາຖືກຫລໍ່ຫລອມແບບໃດ? ຜ່ານທາງ "ເສັ້ນທາງແຫ່ງຈິດວິນຍານ," ເຊິ່ງແມ່ນປະສາດສຳພັດຂອງພວກເຮົາ. ທຸກໆສິ່ງທີ່ພວກເຮົາໄດ້ອ່ານ, ໄດ້ເຫັນ, ຫລືໄດ້ຍິນ ລ້ວນແຕ່ຈະຫລໍ່ຫລອມພວກເຮົາໃນທາງໃດທາງໜຶ່ງ. ແລະ ແນ່ນອນວ່າ ຊາຕານກໍ່ໄດ້ໂຈມຕີປະສາດສຳພັດຂອງພວກເຮົາເພື່ອໃຫ້ພວກເຮົາຄິດໄປຕາມວິທີຂອງມັນ.
ອາຈ ໂປໂລມີຄວາມຄິດທີ່ເລິກເຊິ່ງ. ລາວບໍ່ໄດ້ພຽງແຕ່ໃຫ້ພວກເຮົາສັງເກດຄວາມຄິດຂອງພວກເຮົາເທົ່ານັ້ນ, ແຕ່ວ່າໄດ້ຂໍໃຫ້ພວກເຮົາມີຄວາມຄິດຕາມແບບພຣະເຢຊູ (ຟລປ. 4:8; 2:5).
ບາງເທື່ອພວກເຮົາສາມາດເຮັດໄດ້, ໂດຍຄວາມພະຍາຍາມຢ່າງຫລາຍ, ແຕ່ວ່າການປ່ຽນຄວາມຄິດຂອງພວກເຮົາໃຫ້ສອດຄ້ອງກັບຄວາມຄິດຂອງພຣະເຢຊູນັ້ນ ເຮົາສາມາດເຮັດໄດ້ໂດຍພຣະວິນຍານບໍຣິສຸດເທົ່ານັ້ນເພາະວ່າຄວາມຄິດຂອງພວກເຮົາເປັນຄວາມຄິດຝ່າຍເນື້ອໜັງ, ແລະ ຈິດໃຈຂອງພວກເຮົາກໍ່ຫລອກລວງ(ຢຣມຢ 17:9). ແຕ່ພຣະວິນຍານບໍຣິສຸດຈະປ່ຽນແປງຄວາມຄິດຝ່າຍເນື້ອໜັງຂອງພວກເຮົາ ໃຫ້ເປັນຄວາມຄິດຝ່າຍຈິດວິນຍານ ຄືກັບພຣະເຢຊູ (ໂຣມ 8:1, 5).

### <u>ຂໍ້ຄິດເພີ່ມເຕີມ</u>

ວິທີທີ່ເຮົາຈະຄິດຄືກັບພຣະເຢຊູມີ 3 ວິທີຄື:

1. ມີຈິດໃຈແບບພຣະເຢຊູ
2. ເອົາແບບຢ່າງຂອງພຣະເຢຊູມາເປັນແບບຢ່າງໃນການດຳເນີນຊີວິດ
3. ໃຫ້ພຣະວິນຍານບໍຣິສຸດປ່ຽນໃຈຂອງພວກເຮົາ

ການຄິດແບບພຣະເຢຊູບໍ່ໄດ້ໝາຍເຖິງພຽງແຕ່ການເຂົ້າໃຈຫລັກຄຳສອນຂອງພຣະອົງ. ແຕ່ໝາຍເຖິງການເຮັດຕາມແບບທີ່ພຣະອົງວາງໄວ້ໃຫ້. ແລ້ວ ຄວາມຮັກໃນຄຣິດຕະຈັກຈະເກີດຂຶ້ນຢ່າງແທ້ຈິງ

## EGW (Patriarchs and Prophets, p. 436)

"ແຕ່ພວກເຮົາຍັງມີວຽກງານທີ່ຕ້ອງເຮັດເພື່ອຜ່ານການທົດລອງ. ຜູ້ທີ່ບໍ່ຕ້ອງການຕົກເປັນເຫຍື່ອຂອງກົນອຸບາຍຂອງຊາຕານ ຕ້ອງເຝົ້າລະວັງເສັ້ນທາງແຫ່ງຈິດວິນຍານໃຫ້ດີ; ພວກເຂົາຕ້ອງອ່ານ, ເບິ່ງ, ຫລືຟັງແຕ່ສິ່ງທີ່ຈະນຳຄວາມຄິດໃຫ້ບໍຣິສຸດເທົ່ານັ້ນ. ບໍ່ຄວນປ່ອຍໃຫ້ຈິດໃຈລ່ອງລອຍໄປເລື້ອຍໆຕາມສິ່ງຕ່າງໆທີ່ສັດຕູແຫ່ງຈິດວິນຍານໄດ້ຊັກຈູງ."

## ທັດສະນະຄະຕິຂອງພຣະເຢຊູ (1)

“ພຣະອົງຊົງສະພາບຂອງພຣະເຈົ້າ ແຕ່ບໍ່ໄດ້ຊົງຖືວ່າການເທົ່າທຽມກັບພຣະເຈົ້ານັ້ນ ເປັນສິ່ງທີ່ຕ້ອງຍຶດຫວງໄວ້” (ຟລປ 2:6)
ອຈ ໂປໂລ ໄດ້ເນັ້ນ 3 ຄຸນລັກສະນະນິໄສຂອງພຣະເຢຊູ:

| |
|---|
| **ພຣະອົງສະຫລະສິດແຫ່ງການເປັນພຣະເຈົ້າ (ຟລປ. 2:6)** |
| **ພຣະອົງກາຍມາເປັນມະນຸດເພື່ອຊ່ວຍພວກເຮົາ (ຟລປ. 2:7)** |
| **ພຣະອົງຊົງເຊື່ອຟັງພຣະບິດາດ້ວຍຖ່ອມໃຈ, ແມ້ກະທັ້ງເຖິງຄວາມຕາຍ (ຟລປ. 2:8)** |

ໃນຖານະຜູ້ຊົງສ້າງ, ກາຍມາເປັນ(ເຊັ່ນດຽວກັນກັບ)ຜູ້ທີ່ຖືກສ້າງ. ພຣະອົງຍອມຮັບການຖືກຂົ່ມເຫັງ ແລະ ເຖິງແກ່ຄວາມຕາຍ ເພື່ອໄຖ່ບາບຂອງພວກເຮົາ.ເຖິງວ່າພຣະເຢຊູຊົງມີຖານະເທົ່າທຽມກັບພຣະບິດາ ແລະ ພຣະວິນຍານບໍຣິສຸດ (ພຣະເຈົ້າສາມພຣະພາກ), ແຕ່ການທີ່ພຣະເຢຊູຍອມເຊື່ອຟັງພຣະປະສົງຂອງພຣະບິດາແມ່ນເຊື່ອຟັງຢ່າງສົມບູນແບບ.
ບໍ່ມີຊ່ວງເວລາທີ່ພຣະອົງປະຕິເສດທີ່ຈະບໍ່ເຊື່ອຟັງເລີຍ
ເມື່ອພວກເຮົາຄິດເຖິງເລື່ອງນີ້,
ພວກເຮົາກໍ່ຄວນເຮັດການກົ້ມຂາບລົງນະມັດສະການພຣະຜູ້ຊ່ວຍໃຫ້ລອດທີ່ວິເສດຂອງພວກເຮົາພຣະອົງຊົງເປັນແບບຢ່າງຂອງພວກເຮົາ. ພວກເຮົາຕ້ອງເຕັມໃຈທີ່ຈະຖ່ອມໂຕ ແລະ ເສຍສະຫລະຜົນປະໂຫຍດຂອງຕົນເອງເພື່ອຜົນປະໂຫຍດຂອງສ່ວນລວມ

## ທັດສະນະຄະຕິຂອງພຣະເຢຊູ (2)

“ເຮົາຕ້ອງຍອມຮັບເຖິງຄວາມຍິ່ງໃຫຍ່ໃນຂໍ້ເລິກລັບແຫ່ງຄວາມເຊື່ອຂອງພວກເຮົາຄື: ພຣະອົງໄດ້ປາກົດໃນສະພາບມະນຸດ ໄດ້ຖືກຊົງສຳແດງໃຫ້ເຫັນເປັນຜູ້ຊອບທຳໂດຍພຣະວິນຍານ ຊົງສຳແດງພຣະອົງແກ່ພວກເທວະດາ ມີຜູ້ປະກາດເລື່ອງພຣະອົງ ໃນທ່າມກາງພວກຕ່າງຊາດ, ມີຜູ້ເຊື່ອຖືພຣະອົງທົ່ວທັງໂລກ ແລະ ຖືກຮັບຂຶ້ນສູ່ສະຫງ່າຣາສີ”
(1 ຕມທ 3:16)
ການທີ່ພຣະຄຣິດຊົງຖ່ອມພຣະອົງລົງມາເປັນມະນຸດຢ່າງໜ້າອັດສະຈັນນັ້ນ ຈະເປັນຫົວຂໍ້ໃຫ້ຜູ້ທີ່ໄດ້ຮັບການໄຖ່ບາບ ໄດ້ຮຽນຮູ້ສຶກສາຕະຫລອດນິຣັນມັນເປັນເລື່ອງທີ່ເຫລືອເຊື່ອ ທີ່ພຣະເຈົ້າຜູ້ຊົງນິຣັນດອນຈະຊົງກາຍມາເປັນມະນຸດຜູ້ມີຂີດຈຳກັດ ແລະ ຕ້ອງຕາຍ. ສິ່ງນີ້ ອຈ ໂປໂລ ເອີ້ນວ່າ “ຂໍ້ເລິກລັບ...ແຫ່ງພຣະເຈົ້າ” (1 ຕມທ. 3:16).
ພຣະອົງຊົງປ່ຽນສະພາບຈາກຜູ້ມີອຳນາດສູງສຸດມາເປັນຜູ້ຮັບໃຊ້ຢ່າງສົມບູນແບບ.
ນີ້ແມ່ນສິ່ງທີ່ກົງກັນຂ້າມກັບສິ່ງທີ່ລູຊີເຟີປາຖະໜາທີ່ຈະເປັນ, ເພາະມັນເປັນຜູ້ຮັບໃຊ້
ແຕ່ປາຖະໜາຢາກຈະເປັນພຣະເຈົ້າອົງສູງສຸດ
ແບບຢ່າງນີ້ ໄດ້ຮຽກຮ້ອງພວກເຮົາໃຫ້ເຊົາເຫັນແກ່ໂຕ ແລະ ເອົາຄວາມປາຖະໜາທີ່ຈະໄດ້ຮັບການຮັບໃຊ້ອອກ ແລະ ແທນດ້ວຍຄວາມຖ່ອມໂຕ ແລະ ຄວາມເຕັມໃຈທີ່ຈະຮັບໃຊ້ຜູ້ອື່ນມາແທນ.

## ຂໍ້ຄິດເພີ່ມເຕີມ

ທັດສະນະຄະຕິຂອງພຣະເຢຊູໄດ້ສອນພວກເຮົາ 4 ຢ່າງຄື:

ຄວາມຖ່ອມໃຈ
ຄິດເຖິງຜູ້ອື່ນກ່ອນຕົນເອງ
ຍອມເຮັດຕາມພຣະປະສົງຂອງພຣະເຈົ້າ
ຮັບໃຊ້ຜູ້ອື່ນດ້ວຍຄວາມຮັກ

## EGW (That I May Know Him, May 8)

“ພຣະເຈົ້າຊົງອະນຸຍາດໃຫ້ມະນຸດທຸກຄົນໄດ້ສະແດງຄວາມເປັນຕົວຕົນຂອງຕົນເອງ.
ພຣະອົງບໍ່ໄດ້ປາຖະໜາໃຫ້ເອົາຄວາມຄິດຂອງຕົນເອງໄປປຽບທຽບກັບຄວາມຄິດຂອງຜູ້ອື່ນ.
ຜູ້ທີ່ປາຖະໜາຢາກຈະປ່ຽນແປງຄວາມຄິດ ແລະ ອຸປະນິໄສບໍ່ຄວານໄປເພິ່ງພາມະນຸດ
ແຕ່ຄວນໄປເພິ່ງພາແບບຢ່າງຈາກພຣະເຈົ້າ ເຊິ່ງມີພຣະວິນຍານບໍຣິສຸດເປັນຜູ້ນໍາ. ພຣະອົງຊົງເຊື້ອເຊີນ
“ຈົ່ງໃຫ້ຄວາມຄິດເຊັ່ນດຽວກັນກັບທີ່ຢູ່ໃນພຣະຄຣິດ ຢູ່ໃນໂຕຂອງພວກເຮົາ.” ໂດຍການກັບໃຈ ແລະ ການປ່ຽນແປງ
ມະນຸດຈະໄດ້ຮັບຄວາມຄິດຂອງພຣະເຢຊູ.”